# ບົດບັນທຶກ

## ກອງປະຊຸມຄັ້ງທີ V ຂອງຄະນະປະສານງານຮ່ວມມື ພາກເໜືອ ສປປ ລາວ ກັບ ແຂວງຢຸນນານ ສປ ຈີນ

ຄັ້ງວັນທີ 12-13 ກັນຍາ ປີ 2011

ທີ່ແຂວງຫຼວງນ້ຳທາ ສປປ ລາວ

ກອງປະຊຸມຄັ້ງທີ V ຂອງຄະນະປະສານງານຮ່ວມມື ພາກເໜືອ ສປປ ລາວ ກັບ ແຂວງຢຸນນານ ສປ ຈີນ ໄດ້ຈັດຂຶ້ນ ໃນລະຫວ່າງວັນທີ 12-13 ກັນຍາ 2011 ທີ່ແຂວງຫຼວງນ້ຳທາ ສປປ ລາວ ໃນທ່າມກາງທີ່ ສປປ ລາວ ແລະ ສປ ຈີນ ສະເຫຼີມສະຫຼອງການສ້າງຕັ້ງສາຍພົວພັນການທູດລາວ-ຈີນ ຄົບຮອບ 50 ປີ.

ກອງປະຊຸມຄັ້ງນີ້ ໂດຍການເປັນກຽດເຂົ້າຮ່ວມຂອງບັນດາການນຳກະຊວງ, ບັນດາການນຳຂອງບາງແຂວງພາກເໜືອລາວ, ພະນັກງານທີ່ກ່ຽວຂ້ອງຂອງຄະນະປະສານງານຮ່ວມມືພາກເໜືອລາວ ກັບ ແຂວງຢຸນນານ ແລະ ບັນດານັກທຸລະກິດຈຳນວນໜຶ່ງເຂົ້າຮ່ວມກອງປະຊຸມໃນຄັ້ງນີ້.

ກອງປະຊຸມສະແດງຄວາມຂອບໃຈຕໍ່ລັດຖະບານ ສປປ ລາວ ແລະ ລັດຖະບານ ສປ ຈີນ ໃຫ້ຄວາມສຳຄັນ, ເປັນຫ່ວງເປັນໃຍ, ໃຫ້ການສະໜັບສະໜູນ ແລະ ຊີ້ນຳຢ່າງໃກ້ຊິດຕໍ່ການເພີ່ມທະວີ ແລະ ຊຸກຍູ້ການຮ່ວມມື ລະຫວ່າງ ພາກເໜືອ ສປປ ລາວ ກັບ ແຂວງຢຸນນານ ສປ ຈີນ.

ຝ່າຍຈີນສະແດງຄວາມຂອບໃຈຕໍ່ຝ່າຍລາວ ທີ່ໄດ້ໃຫ້ຄວາມເອົາໃຈໃສ່ໃນການກະກຽມເພື່ອເຮັດໃຫ້ການຈັດກອງປະຊຸມໃນຄັ້ງນີ້ໄດ້ຮັບຜົນສຳເລັດ, ພ້ອມນີ້ກໍສະແດງຄວາມຂອບໃຈ ຕໍ່ຝ່າຍລາວເປັນຕົ້ນແມ່ນແຂວງຫຼວງນ້ຳທາ ທີ່ໄດ້ໃຫ້ການຕ້ອນຮັບຄະນະຜູ້ແທນຝ່າຍຈີນຢ່າງອົບອຸ່ນ. ຝ່າຍລາວກໍສະແດງຄວາມຂອບໃຈມາຍັງຜູ້ແທນຄະນະປະສານງານຮ່ວມມືແຂວງຢຸນນານ ກັບ ພາກເໜືອລາວ ທີ່ໄດ້ເດີນທາງມາຮ່ວມກອງປະຊຸມຄັ້ງນີ້, ພ້ອມນີ້ ກໍ່ຍັງສະແດງຄວາມຂອບໃຈ ຕໍ່ອຳນາດການປົກຄອງແຂວງຢຸນນານທີ່ໄດ້ໃຫ້ຄວາມສຳຄັນເປັນຢ່າງສູງຕໍ່ກັບການເຂົ້າຮ່ວມກອງປະຊຸມໃນຄັ້ງນີ້.

ທ່ານ ພິມມະສອນ ເລືອງຄຳມາ ເຈົ້າແຂວງໆຫຼວງນ້ຳທາໄດ້ກ່າວສະແດງຄວາມຕ້ອນຮັບ ແລະ ຊົມເຊີຍຄະນະຜູ້ແທນທັງສອງຝ່າຍທີ່ເຂົ້າຮ່ວມກອງປະຊຸມດ້ວຍຄວາມອົບອຸ່ນ. ທ່ານ ນາງ ເຂັມມະນີ ພົນເສນາ ລັດຖະມົນຕີຊ່ວຍວ່າການກະຊວງອຸດສາຫະກຳ ແລະ ການຄ້າ, ຮອງປະທານ ຄະນະກຳມາທິການຮ່ວມມືລາວ-ຈີນ ທັງເປັນຫົວໜ້າຄະນະປະສານງານຝ່າຍລາວ ແລະ ທ່ານ ໄຊຍ ຈົ້ເທົາ ຮອງເລຂາທິການ, ຫົວໜ້າຫ້ອງວ່າການອຳນາດການປົກຄອງແຂວງຢຸນນານ, ຮອງຫົວໜ້າຄະນະປະສານງານຝ່າຍຈີນ ໂດຍໄດ້ຮັບການມອບສິດຈາກ ທ່ານ Gu Zhao Xi ຮອງເຈົ້າແຂວງໆຢຸນນານ ທັງເປັນຫົວໜ້າຄະນະປະສານງານຝ່າຍຈີນ ເຊິ່ງຕ່າງຝ່າຍກໍໄດ້ຂຶ້ນກ່າວຄຳປາໄສຢູ່ໃນກອງປະຊຸມດັ່ງກ່າວ, ເຊິ່ງໄດ້ແຈ້ງ ແລະ ລາຍງານສະພາບຄວາມຄືບໜ້າທີ່ພົ້ນເດັ່ນ ຕໍ່ກັບການຮ່ວມມືກັນຂອງທັງສອງຝ່າຍໃນໄລຍະ 2 ປີ ຜ່ານມາໃຫ້ກັນຮັບຊາບ ພ້ອມທັງສະເໜີທິດທາງກົນໄກ ແລະ ຈຸດສຸມການຮ່ວມມືຂອງສອງຝ່າຍຮອດກອງປະຊຸມຄັ້ງທີ VI.

ກອງປະຊຸມໄດ້ທົບທວນຄືນສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ບັນດາແຂວງພາກເໜືອລາວ ກັບ ແຂວງຢຸນນານ ແລະ ຍັງໄດ້ສະຫຼຸບສະພາບຄວາມຄືບໜ້າການຮ່ວມມື ໃນໄລຍະ 2

ປີຜ່ານມາ ເຊິ່ງເຫັນໄດ້ວ່າ ການຮ່ວມມືກັນໃນຫລາຍຂົງເຂດທີ່ສຳຄັນ ແມ່ນໄດ້ຮັບໝາກຜົນອັນພົ້ນເດັ່ນ ແລະ ມີຄວາມຄືບໜ້າໃໝ່. ອັນສຳຄັນກວ່າໝູ່ແມ່ນການຈັດຕັ້ງ ແລະ ຜັນຂະຫຍາຍແຜນແມ່ບົດພັດທະນາເສດຖະກິດພາກເໜືອລາວ ເຊິ່ງເປັນໂຄງການທີ່ລັດຖະບານຈີນໃຫ້ການຊ່ວຍເຫລືອແກ່ລາວ ແລະ ຝ່າຍລາວກໍ່ໄດ້ຈັດສັນເຂົ້າໃນແຜນພັດທະນາເສດຖະກິດສັງຄົມ 5 ປີ ຄັ້ງທີ VII ເຮັດໃຫ້ໄດ້ຮັບຜົນສຳເລັດໃນເບື້ອງຕົ້ນ.

ໃນລະຫວ່າງສອງກອງປະຊຸມ ທັງສອງຝ່າຍໄດ້ຮ່ວມກັນຈັດພິທີສະເຫຼີມສະຫຼອງການສ້າງຕັ້ງສາຍພົວພັນການທູດລາວ-ຈີນ ຄົບຮອບ 50 ປີ ທີ່ນະຄອນຄຸນໝິງ.

ທັງສອງຝ່າຍເຫັນເປັນເອກະພາບກັນວ່າ: ກົນໄກການຮ່ວມມື ລະຫວ່າງ ພາກເໜືອ ສປປ ລາວ ກັບ ແຂວງຢຸນນານ ສປ ຈີນ ນີ້ ແມ່ນໄດ້ກາຍເປັນເວທີອັນສຳຄັນ ໃນການຊຸກຍູ້ສົ່ງເສີມການພັດທະນາວຽກງານການຮ່ວມມືກັນຢ່າງຮອບດ້ານ ແລະ ທັງເປັນການສົ່ງເສີມສາຍພົວພັນມິດຕະພາບທີ່ມີມູນເຊື້ອມາແຕ່ດົນນານ ໃຫ້ກາຍເປັນຄູ່ຮ່ວມມືຍຸດທະສາດຮອບດ້ານຢ່າງແທ້ຈິງ. ກອງປະຊຸມໄດ້ຈັດແບ່ງອອກເປັນ 7 ກຸ່ມງານ ເຊິ່ງໄດ້ດຳເນີນການປຶກສາຫາລືຢ່າງເລິກເຊິ່ງຕໍ່ໂຄງການທີ່ສຳຄັນ ແລະ ບັນຫາທີ່ກ່ຽວຂ້ອງກັບການຮ່ວມມືຂອງສອງຝ່າຍ, ເຊິ່ງທັງສອງຝ່າຍໄດ້ເຫັນດີເປັນເອກະພາບກັນດັ່ງຕໍ່ໄປນີ້:

**I. ສະພາບຄວາມຄືບໜ້າ ໃນການປະຕິບັດວຽກງານການຮ່ວມມືກັນທີ່ສຳຄັນ ໃນໄລຍະ 2 ປີ ຜ່ານມາ ລະຫວ່າງ ພາກເໜືອລາວ-ຢຸນນານ.**

**1. ການໄປມາຢ້ຽມຢາມຂອງການນຳຂັ້ນສູງນັບມື້ຫຼາຍຂຶ້ນ.**

ນັບແຕ່ປີ 2009 ການນຳຂອງພັກ, ຂອງປະເທດ ແລະ ການນຳກະຊວງອ້ອມຂ້າງສູນກາງ, ຂັ້ນທ້ອງຖິ່ນ, ຂັ້ນເມືອງຂອງລາວ, ໄດ້ເດີນທາງໄປຢ້ຽມຢາມ ຫຼື ແວ່ຢາມແຂວງຢຸນນານຕາມຄຳເຊື້ອເຊີນ, ເຂົ້າຮ່ວມກິດຈະກຳສະເຫຼີມສະຫຼອງຕ່າງໆ ລ້ວນແຕ່ໄດ້ຮັບການຕ້ອນຮັບຢ່າງອົບອຸ່ນ. ການນຳຂອງນະຄອນຄຸນໝິງ, ນະຄອນພູເອີ, ກິ່ງແຂວງສິບສອງພັນນາ ແລະ ເມືອງຕ່າງໆຂອງແຂວງຢຸນນານ ກໍ່ໄດ້ນຳພາຄະນະຜູ້ແທນຢ້ຽມຢາມລາວຕາມການເຊື້ອເຊີນ ພ້ອມທັງໄດ້ຮັບການຕ້ອນຮັບຢ່າງອົບອຸ່ນເຊັ່ນກັນ.

**2. ການຮ່ວມມືດ້ານການຄ້າ ແລະ ການລົງທຶນ**

2.1. ພະນັກງານຂອງຂະແໜງອຸດສາຫະກຳ ແລະ ການຄ້າແຂວງຂອງ ສປປ ລາວ ທີ່ມີຊາຍແດນຕິດກັບແຂວງຢຸນນານໄດ້ພົບປະ, ທັດສະນະສຶກສາເປັນປະຈຳທຸກປີ ຊຶ່ງເຮັດໃຫ້ການແລກປ່ຽນບົດຮຽນກັບແຂວງຢຸນນານເປັນລະບົບ ແລະ ໃກ້ຊິດກັນຫຼາຍຂຶ້ນ ເຊັ່ນ: ໃນວັນທີ 22 ກໍລະກົດ 2011 ພະແນກອຸດສາຫະກຳ ແລະ ການຄ້າແຂວງຫຼວງນ້ຳທາ ແລະ ພະແນກການຄ້າກິ່ງແຂວງສິບສອງພັນນາແຂວງຢຸນນານ ໄດ້ມີການພົບປະແລກປ່ຽນບົດຮຽນເພື່ອເພີ່ມທະວີການແລກປ່ຽນ ແລະ ການຮ່ວມມືທາງດ້ານການຄ້າ, ການລົງທຶນບົນພື້ນຖານຕ່າງຝ່າຍຕ່າງມີຜົນປະໂຫຍດ. ນອກນັ້ນ, ນັກທຸລະກິດ ແລະ ບັນດາບໍລິສັດຕ່າງໆກໍ່ໄດ້ເຂົ້າຮ່ວມງານຕະຫຼາດນັດຢູ່ແຂວງຢຸນນານ,ສປຈີນ. ເພື່ອວາງສະແດງສິນຄ້າ ແລະ ຂາຍຜະລິດຕະພັນທີ່ປະຊາຊົນຜະລິດໄດ້ ເຊິ່ງເຮັດໃຫ້ບັນຍາກາດການພົວພັນຄ້າຂາຍສອງຝ່າຍຟົດຟື້ນຂຶ້ນກວ່າເກົ່າ.

2.2. ດ້ານການຄ້າຂາອອກ-ຂາເຂົ້າ, ພາຍໃຕ້ການຊຸກຍູ້ຮ່ວມກັນຂອງສອງຝ່າຍ, ລວມທັງໃນຂອບສອງຝ່າຍ, ອາຊຽນ-ຈີນ ແລະ ອະນຸພາກພື້ນ ເຮັດໃຫ້ການພົວພັນດ້ານການຄ້າສອງຝ່າຍມີການຂະຫຍາຍຕົວລົງສູ່ລວງເລິກ ແລະ ກວ້າງຂວາງຂຶ້ນກວ່າເກົ່າ ເຊິ່ງມັນສະແດງອອກ, ໃນປີ 2009 ມູນຄ່າການຄ້າ ບັນລຸໄດ້ປະມານ 154,37 ລ້ານ ໂດລາສະຫະລັດ, ທຽບໃສ່ປີ 2008 ເພີ່ມຂຶ້ນ 40,3%; ໃນປີ 2010 ມູນຄ່າການຄ້າ **ລະຫວ່າງ**ຢຸນນານ ແລະ ລາວບັນລຸໄດ້ 203 ລ້ານ ໂດລາ ສະຫະລັດ ເທົ່າກັບ 1/5 ຂອງຍອດມູນຄ່າການຄ້າລາວ-ຈີນ, ທຽບໃສ່ປີ 2009 ເພີ່ມຂຶ້ນ 31,5 %. ສະເພາະເດືອນ 1-6 ປີ 2011 ມູນຄ່າການຄ້າສອງຝ່າຍບັນລຸ 139 ລ້ານ ໂດລາ ສຫລ, ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 52,7% ໃນນີ້ຝ່າຍລາວນຳເຂົ້າ 52 ລ້ານ ເພີ່ມຂຶ້ນ 11,5% ລາວສົ່ງອອກ 87 ລ້ານ ເພີ່ມຂຶ້ນ 96,3%.

2.3. ຮອດເດືອນ 6/2011 ແຂວງຢຸນນານໄດ້ສົ່ງວິສາຫະກິດມາລົງທຶນຕ່າງປະເທດຢູ່ໃນ ສປປ ລາວ ເຖິງ 126 ບໍລິສັດ, ມູນຄ່າສັນຍາປະມານ 740 ລ້ານ ໂດລາ ສຫລ, ເງິນລົງທຶນຕົວຈິງປະມານ 298 ລ້ານ ໂດລາ ສຫລ, ການຮ່ວມມືກັນດ້ານເສດຖະກິດເຕັກນິກ ແລະ ການລົງທຶນຂອງສອງຝ່າຍ, ມາຮອດທ້າຍປີ 2010 ນັກທຸລະກິດແຂວງຢຸນນານໄດ້ເຊັນສັນຍາຮັບເໝົາໂຄງການຮ່ວມມືດ້ານເສດຖະກິດ-ເຕັກນິກ ມີມູນຄ່າປະມານ 879 ລ້ານ ໂດລາ ສຫລ. ນັບແຕ່ປີ 2009, ສອງຝ່າຍໄດ້ວາງແຜນ ແລະ ຈັດຕັ້ງປະຕິບັດໂຄງການຮ່ວມມືຈຳນວນໜຶ່ງເຊັ່ນ: ໂຄງການສະໜາມກິລາຊີເກມ, ສູນການຄ້າບໍລິໂພກອາຊຽນຂອງກຸ່ມບໍລິສັດວິສາວະກຳກໍ່ສ້າງຢຸນນານ, ອູ່ສ້ອມແປງເຮືອບິນ ແລະ ຕຶກເຝິກອົບຮົມບໍລິສັດການບິນລາວ, ການຜະລິດຊີມັງລາວ 2500 ໂຕນ/ມື້, ໂຄງການຊ່ວຍເຫຼືອກໍ່ສ້າງສະໜາມເຝິກຊ້ອມກອງທັບລາວ ແລະ ອື່ນໆ. ໂຄງການພັດທະນາແບບກວມລວມ ຢູ່ນະຄອນຫຼວງວຽງຈັນເນື້ອທີ່ 1000 ຮຕ ຂອງບໍລິສັດລົງທຶນຕ່າງປະເທດຂອງບໍລິສັດວິສາວະກຳກໍ່ສ້າງຢຸນນານ, ຫ້ອງການຕາງໜ້າທະນາຄານຟູດຽນ, ສຳຫຼວດອອກແບບໂຄງການເຂື່ອນໄຟຟ້ານ້ຳອູຂອງສະຖາບັນສຳຫຼວດອອກແບບຄູນໝິງ ກຸ່ມບໍລິສັດທີ່ປຶກສາເຂື່ອນໄຟຟ້າຈີນ, ໂຄງການສຶກສາຄວາມສາມາດເປັນໄປໄດ້ຂອງໂຄງການເຂື່ອນໄຟຟ້ານ້ຳມັງ 1 ແລະ ອື່ນໆ.

2.4. ສອງຝ່າຍໄດ້ຊຸກຍູ້ໃຫ້ມີການສ້າງເຂດຮ່ວມມືເສດຖະກິດຊາຍແດນບໍ່ເຕັນ-ບໍ່ຫານ ໂດຍກຳນົດ ແລະ ອອກນະໂຍບາຍພິເສດຕໍ່ເຂດຮ່ວມມືດັ່ງກ່າວຂອງສອງຝ່າຍໃຫ້ເປັນເອກະພາບກັນ. ສອງຝ່າຍໄດ້ພະຍາຍາມປັບປຸງ ແລະ ເຈລະຈາກ່ຽວກັບການກຳນົດຂອບເຂດທີ່ຕັ້ງຂອງໂຄງການ, ການສ້າງລະບຽບການ, ການວາງແຜນ, ກົນໄກການຮ່ວມມື ໃຫ້ຈະແຈ້ງເພື່ອໃຫ້ມີຜົນປະໂຫຍດທັງສອງຝ່າຍ.

## 3. ການຮ່ວມມືດ້ານກະສິກຳ-ປ່າໄມ້ ແລະ ປູກພືດທົດແທນ

3.1. ສອງຝ່າຍໄດ້ຮ່ວມກັນຊຸກຍູ້ປະຕິບັດ ໂຄງການສ້າງດ່ານກວດກາ ແລະ ກັກກັນພະຍາດພືດ ແລະ ສັດໃຫ້ເປັນຮູບປະທຳ. ເດືອນ 11 ປີ 2009 ໂຄງການກໍ່ສ້າງດ່ານກວດກາ ແລະ ກັກກັນພະຍາດພືດ ແລະ ສັດ ຢູ່ແຂວງຜົ້ງສາລີ ແລະ ບໍ່ແກ້ວໄດ້ສຳເລັດພ້ອມທັງນຳໃຊ້ແລ້ວ, ພ້ອມກັນນັ້ນ, ພະແນກກະສິກຳແຂວງຢູນນານຍັງໄດ້ມອບອຸປະກອນວິໄຈຈຳນວນ 216 ຊຸດ, ວັດຖຸໃຊ້ໃນຫ້ອງທົດລອງ 380 ຊຸດແກ່ດ່ານກວດກາຂອງສອງແຂວງນີ້ ລວມມູນຄ່າ 500.000 ຢວນ ແລະ ໄດ້ຈັດພິທີມອບ-ຮັບແລ້ວ.

3.2. ສອງຝ່າຍໄດ້ຮ່ວມກັນຊຸກຍູ້ ແລະ ຈັດຕັ້ງປະຕິບັດໂຄງການສ້າງສວນສາທິດເຕັກນິກກະສິກຳລະຫວ່າງແຂວງອຸດົມໄຊກັບແຂວງຢຸນນານ,ຮອດປະຈຸບັນກໍໄດ້ດຳເນີນໄປດ້ວຍຄວາມຄືບໜ້າ ແລະ ມີປະສິດທິພາບດີ. ອີງຕາມການສະເໜີຂອງຝ່າຍລາວ, ໃນເດືອນ 4 ປີ 2011 ພະແນກກະສິກຳກິ່ງແຂວງສິບສອງພັນນາ ແຂວງຢຸນນານ ເປັນຕົວແທນຝ່າຍຈີນ ໄດ້ເຊັນສັນຍາວ່າດ້ວຍເຈດຈຳນົງກ່ຽວກັບການຂະຫຍາຍເນື້ອທີ່ສວນສາທິດ ແລະ ຂະຫຍາຍໄລຍະເວລາຮ່ວມກັບພະແນກກະສິກຳ ແລະ ປ່າໄມ້ແຂວງອຸດົມໄຊ. ບໍລິສັດພູເອີທົວຢາເສດຖະກິດການຄ້າຈຳກັດ ໄດ້ລົງທຶນ 2.500.000 ໂດລາ ສຫລ ເພື່ອຈັດຕັ້ງປະຕິບັດໂຄງການຮ່ວມມືພັດທະນາແບບກວມລວມ ແລະ ກະສິກຳຢູ່ແຂວງວຽງຈັນ ສປປ ລາວ.

3.3. ເດືອນ 12 ປີ 2009 , ພະແນກຄຸ້ມຄອງເຂດສະຫງວນທຳມະຊາດລະດັບຊາດຂອງກິ່ງແຂວງສິບສອງພັນນາໄດ້ລົງນາມໃນ <<ສັນຍາຮ່ວມມື ລະຫວ່າງ ສາງຢົງກິ່ງແຂວງສິບສອງພັນນາຈີນ ແລະ ເຂດສະຫງວນນ້ຳກິງແຂວງຫຼວງນ້ຳທາ>>, ໄດ້ເລີ່ມຕົ້ນກົນໄກຮ່ວມມື ແລະ ການປະຕິບັດການຂອງສອງຝ່າຍໃນວຽກງານສະຫງວນຊັບພະຍາກອນຊີວະນາໆພັນ ໃນເຂດກວມຊາຍແດນ. ພ້ອມທັງເລີ່ມດຳເນີນການຮ່ວມມືສະຫງວນຕົ້ນໄມ້, ສັດນ້ຳ, ສັດບົກນາໆພັນໃນເຂດສະຫງວນເນື້ອທີ່ 57.700 ຮຕ ແຫ່ງນີ້. ໄດ້ຈັດກອງປະຊຸມຊຸກຍູ້ການຮ່ວມມືຂົງເຂດສະຫງວນລາວ-ຈີນ, ຈັດຕັ້ງຜູ້ຄຸ້ມຄອງລາວ-ຈີນໄປເຝິກອົບຮົມເຕັກນິກກວດກາປ້ອງກັນນອກປ່າ ແລະ ເຕັກນິກລະບົບຄຸ້ມຄອງເຂດສະຫງວນທຳມະຊາດຢູ່ປະເທດໄທ.

3.4. ແຂວງຢຸນນານໄດ້ສ້າງຕັ້ງກົນໄກພະນັກງານປະສານງານກ່ຽວກັບການປ້ອງກັນໄຟໄໝ້ປ່າຊາຍແດນກັບແຂວງຫຼວງນ້ຳທາ, ແຂວງຜົ້ງສາລີ ແລະ ແຂວງອຸດົມໄຊ.

3.5. ປີ 2009 ຫາ ປີ 2010 ພະແນກກະສິກຳແຂວງຢຸນນານ ມອບໝາຍໃຫ້ກະສິກຳກິ່ງແຂວງສິບສອງພັນນາ ຈັດເຝິກອົບຮົມການນຳໃຊ້ເຕັກນິກຫຼາຍໆເທື່ອເຊັ່ນ: ການປູກກ້າເຂົ້າເຂດອາກາດຊຸ່ມ, ການຄວບຄຸມໄພອັນເກີດຈາກໂລກ ແລະ ແມງໄມ້, ວິຊາການສັດຕະວະແພດສັດ, ວິຊາການກວດກາສັດທີ່ຂ້າມແດນ. ໃນນີ້ ປີ 2010 ໄດ້ຈັດຕັ້ງການເຝິກອົບຮົມເຕັກນິກນຳໃຊ້ວິທະຍາສາດກະສິກຳ ຈຳນວນ 3 ຄັ້ງ, ມີພະນັກງານວິທະຍາສາດກະສິກຳຂອງລາວເຂົ້າຮ່ວມທັງໝົດ 110 ຄົນ.

3.6. ສອງຝ່າຍສືບຕໍ່ຊຸກຍູ້ໃຫ້ມີການເຊັນສັນຍາປູກພືດທົດແທນການປູກຝິ່ນພ້ອມກັນຊຸກຍູ້ໃຫ້ສັນຍາໄດ້ມີການຈັດຕັ້ງປະຕິວັດຕົວຈິງຢູ່ໃນຂົງເຂດທີ່ກຳນົດໄວ້. ປີ 2009 - 2010 ຝ່າຍຈີນໄດ້ໃຫ້ໂກຕາຂາຍສາລີທີ່ປູກພາຍໃຕ້ຂອບໂຄງການປູກພືດທົດແທນໄປຈີນຈຳນວນ 120.000 ໂຕນ, ໃນຕົວຈິງປະຕິບັດໄດ້ 80.000 ໂຕນ ສຳເລັດ 67%, ຕົ້ນເດືອນ 3 ປີ 2011 ສອງປະເທດໄດ້ສຳເລັດການຈັດກອງປະຊຸມກວດກາວັດແທກທາງໄກການປູກຝິ່ນ ແລະ ວຽກງານປະສານງານຕິດຕໍ່ການພັດທະນາການທົດແທນ, ທັງສອງຝ່າຍໄດ້ແຈ້ງສະພາບໃຫ້ກັນຊາບ, ແລກປ່ຽນຄຳເຫັນສຶກສານະໂຍບາຍ, ຊຸກຍູ້ວຽກງານການພັດທະນາການປູກພືດທົດແທນຢູ່ພາກເໜືອລາວ ຢ່າງມີທ່າແຮງ. ຝ່າຍລາວໄດ້ຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງຂອງຝ່າຍຈີນ ດຳເນີນການສຳຫລວດກວດກາການປະຕິບັດໂຄງການປູກພືດທົດແທນການປູກຝິ່ນຂອງ 59 ບໍລິສັດ ຈີນ ທີ່ມາລົງທຶນຢູ່ 5 ແຂວງພາກເໜືອຂອງລາວ.

3.7. ເດືອນ 6 ປີ 2011 ການນຳສຳຄັນຂອງກົ່ງແຂວງສິບສອງພັນນາ ພ້ອມຄະນະໄດ້ເດີນທາງມາຢ້ຽມຢາມ ສປປ ລາວ ແລະ ໄດ້ເຊັນບົດບັນທຶກຮ່ວມມືພັດທະນາດ້ານກະສິກຳກັບ 5 ແຂວງພາກເໜືອລາວ.

## 4. ການຮ່ວມມືດ້ານພະລັງງານ ແລະ ບໍ່ແຮ່

4.1. ໂຄງການກໍ່ສ້າງຕາຂ່າຍແຫ່ງຊາດ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ(MOU) ໃນວັນທີ 16/06/2010 ລະຫວ່າງ ລັດຖະບານລາວ ກັບບໍລິສັດຕາຂ່າຍໄຟຟ້າພາກໃຕ້ຂອງຈີນ ( CSG ) ນັ້ນ, ບໍລິສັດ CSG ໄດ້ມອບສິດໃຫ້ບໍລິສັດຕາຂ່າຍໄຟຟ້າຢຸນນານເປັນຜູ້ຈັດຕັ້ງປະຕິບັດ. ໃນໄລຍະຜ່ານມາ ບໍລິສັດໄດ້ລົງເກັບກຳຂໍ້ມູນພາກສະໜາມ ແລະ ໄດ້ເຂົ້າມາລາຍງານຜົນການສຶກສາເບື້ອງຕົ້ນແລ້ວ.

4.2. ວັນທີ 5 / 06 / 2011, ບໍລິສັດ Yunnan Power Transmission & Transformation Engineering ( YPTT ) ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ( MOU) ກັບລັດວິສາຫະກິດໄຟຟ້າລາວ ເພື່ອກໍ່ສ້າງຕາຂ່າຍໄຟຟ້າ 35 KV ແຕ່ຈຽງເຊີງຈີນຫາແຂວງຜົ້ງສາລີ ແລະ ໂຄງການສົ່ງຕາຂ່າຍໄຟຟ້າ 22/0.4KV ເຂດເມືອງຍອດອູ ແລະ ເມືອງບຸນເໜືອ. ຄາດວ່າຈະສ້າງສຳເລັດສົມບູນໃນປີ 2012. ເພື່ອເຮັດໃຫ້ການຊື້-ຂາຍໄຟຟ້າ ດຳເນີນໄປຢ່າງວ່ອງໄວ, ສະເໜີໃຫ້ຝ່າຍຈີນມາປຶກສາຫາລືກັບຝ່າຍລາວ ເພື່ອເຈລະຈາ ແລະ ເຊັນສັນຍາຊື້ - ຂາຍໄຟຟ້ານຳກັນ.

4.3. ປັດຈຸບັນ ການລົງທຶນດ້ານບໍ່ແຮ່ຂອງຜູ້ລົງທຶນຈາກ ສປ ຈີນ ມີທັງໝົດ 61 ບໍລິສັດ 109 ກິດຈະການ, ໃນນັ້ນ ມີ 21 ບໍລິສັດ 44 ກິດຈະການ ແມ່ນເປັນການລົງທຶນຂອງນັກທຸລະກິດຈາກແຂວງຢຸນນານ, ຊຶ່ງກວມເອົາ 39.35% ຂອງບໍລິສັດລົງທຶນຈາກ ສປ ຈີນ. ໂດຍແບ່ງເປັນ 3 ປະເພດກິດຈະການ ຄື:1). ກິດຈະການກຳລັງຂຸດຄົ້ນ-ສຳຫລວດ ມີ 16 ກິດຈະການມີ 12 ບໍລິສັດ, 2). ກິດຈະການຢູ່ໃນຂັ້ນຕອນເຮັດບົດວິພາກເສດຖະກິດ-ເຕັກນິກມີ 4 ກິດຈະການ 2 ບໍລິສັດ, 3). ກິດຈະການກ້າວເຂົ້າສູ່ການຂຸດຄົ້ນມີ 24 ກິດຈະການ 11 ບໍລິສັດ.

4.4. ກົມໃຫຍ່ທໍລະນີສາດຂອງຈີນ ( Chaina Geological Survey "CGS"), ເຫັນດີໃຫ້ຈັດຕັ້ງການສຳຫລວດສ້າງແຜນທີ່ທໍລະນີສາດແຜນທີ່ທໍລະນີເຄມີ ມາດຕາສ່ວນ 1/200,000 ດ້ວຍເງິນຊ່ວຍເຫລືອຂອງຕົນເອງ, ສະເພາະປີ 2011 ໄດ້ອະນຸມັດແລ້ວ ຈຳນວນ 21,75 ລ້ານຢວນ, ສ່ວນມູນຄ່າລວມຕາມແຜນການໂຄງການມີຈຳນວນ 21.75 ລ້ານຢວນ. ພ້ອມນັ້ນ ກົມໃຫຍ່ທໍລະນີສາດຈີນ ຍັງໄດ້ມອບໃຫ້ Chengdu Center ທີ່ຂຶ້ນກັບຕົນເອງ ແລະ ສະຖາບັນທໍລະນີສາດແຮ່ທາດຢຸນນານ ເປັນຜູ້ຈັດຕັ້ງປະຕິບັດ. ພາຍຫລັງທີ່ໄດ້ເຊັນສັນຍາຮ່ວມກັບກົມທໍລະນີສາດຂອງລາວ. ປະຈຸບັນ ກົມທໍລະນີສາດຂອງລາວ ໄດ້ຮ່ວມກັບ Chengdu Center ໄດ້ສຳເລັດການຮ່າງແຜນການຂອງໂຄງການ ແລະ ສຳເລັດການຮ່າງສັນຍາຮ່ວມກັນ ແລະ ກໍໄດ້ຮັບການເຫັນດີຈາກລັດຖະບານລາວໃຫ້ເຊັນສັນຍາແລ້ວ. ປະຈຸບັນ ກຳລັງພິຈາລະນາແຕ່ງຕັ້ງວິຊາການຂອງກົມທໍລະນີສາດໄປເຊັນສັນຍາກັບກົມໃຫຍ່ທໍລະນີສາດຂອງຈີນ, ຊຶ່ງຄາດວ່າຈະໄດ້ເລີ່ມຕົ້ນປະຕິບັດໂຄງການໃນໄວໆນີ້.

## 5. ການຮ່ວມມືດ້ານການທ່ອງທ່ຽວ

5.1. ທັງສອງຝ່າຍໄດ້ຮ່ວມມືກັນ ໃນການກຳນົດຮູບແບບຂອງການກວດກາເອກະສານເຂົ້າອອກປະເທດໃຫ້ມີຄວາມສະດວກກ່ວາເກົ່າ, ກຳນົດການເກັບຄ່າທຳນຽມ, ສ້າງກົນໄກເພື່ອຮັບມືກັບເຫດສຸກເສີນດ້ານການທ່ອງທ່ຽວ, ຈັດງານວາງສະແດງດ້ານການທ່ອງທ່ຽວ ແລະ ງານວາງສະແດງອື່ນໆທີ່ສຳຄັນທີ່ພົວພັນເຖິງການທ່ອງທ່ຽວ, ວາງແຜນຂະຫຍາຍເສັ້ນທາງທ່ອງທ່ຽວ, ສົ່ງເສີມການໂຄສະນາດ້ານການທ່ອງທ່ຽວ, ສ້າງກົນໄກ ແລະ ກຳນົດໃຫ້ມີກອງປະຊຸມແລກປ່ຽນປຶກສາຫາລືວຽກງານທ່ອງທ່ຽວຢ່າງເປັນປະຈຳ, ເພື່ອພັດທະນາອຸດສະຫະກຳການທ່ອງທ່ຽວຂອງທັງສອງຝ່າຍ.

5.2. ແຂວງຢຸນນານສືບຕໍ່ນຳໃຊ້ຫຼາຍຮູບແບບຢ່າງມີແຜນການເພື່ອດຳເນີນການເຝິກອົບຮົມແກ່ພະນັກງານທີ່ດຳເນີນກິດຈະການບໍລິການທ່ອງທ່ຽວ ແລະ ພະນັກງານຄຸ້ມຄອງການທ່ອງທ່ຽວ. ບົນພື້ນຖານການຈັດອົບຮົມຈຳນວນ 3 ຄັ້ງ ໃຫ້ແກ່ພະນັກງານຄຸ້ມຄອງການທ່ອງທ່ຽວໃຫ້ແກ່ຝ່າຍລາວກ່ອນໜ້ານີ້, ໃນເດືອນ 6 ປີ 2010 ພະແນກທ່ອງທ່ຽວແຂວງຢຸນນານ ໄດ້ຈັດຕັ້ງການເຝິກອົບຮົມຢູ່ສິບສອງພັນນາໃຫ້ແກ່ພະນັກງານການຄຸ້ມຄອງວຽກງານທ່ອງທ່ຽວລະດັບສູງ ຂອງບັນດາແຂວງພາກເໜືອລາວຈຳນວນ 30 ຄົນ.

5.3. ການບິນລາວ ແລະ ກົງສູນລາວຢູ່ຄຸນໝິງໄດ້ເປີດຫ້ອງການບໍລິການໃຫ້ວີຊາ ແລະ ບໍລິການຂາຍປີ້ເຮືອບິນ ເຊິ່ງໄດ້ສ້າງເງື່ອນໄຂເອື້ອອຳນວຍໃຫ້ແກ່ການທ່ອງທ່ຽວ ລາວ-ຈີນ ອີກກ້າວໜຶ່ງ.

5.4. ປີ 2009-2010 ນະຄອນຜູເອີ້ ແຂວງຢຸນນານອອກທຶນ 1,73 ລ້ານຢວນເພື່ອສ້າງເຮືອນພັກຢູ່ເມືອງຍອດອູ ແຂວງຜົ້ງສາລີ, ໂຄງການໄດ້ສຳເລັດ ແລະ ໄດ້ມອບໃຫ້ຝ່າຍລາວນຳໃຊ້ແລ້ວ.

**6. ການຮ່ວມມືດ້ານຄົມມະນາຄົມ, ຂົນສົ່ງ ແລະ ໄປສະນີ, ໂທລະຄົມ.**

6.1. ສອງຝ່າຍໄດ້ເປີດເສັ້ນທາງຂົນສົ່ງໂດຍສານສິນຄ້າ ຈຳນວນ 13 ສາຍ ແລະ ໄດ້ດຳເນີນເປັນປົກກະຕິ ພ້ອມກັນນີ້ ຝ່າຍລາວກໍ່ໄດ້ອະນຸຍາດເປີດເສັ້ນທາງສາກົນອີກ 2 ເສັ້ນ: ຫ້ວຍຊາຍ-ຊຽງຮຸ່ງ, ຈຽງເສິງ-ຍອດອູ-ຜົ້ງສາລີ, ຝ່າຍຢຸນນານຈະເອົາໃຈໃສ່ສະເໜີຕໍ່ຂັ້ນເທິງເພື່ອໃຫ້ອະນຸຍາດໂດຍໄວ. ປີ 2010 ບໍລິມາດການຂົນສົ່ງຜູ້ໂດຍສານ 105.000 ຄົນ ເພີ່ມຂຶ້ນຈາກປີຜ່ານມາ 2,4%, ບໍລິມາດສິນຄ້າຂົນສົ່ງໄດ້ 602.000 ໂຕນ ເພີ່ມຂຶ້ນຈາກປີຜ່ານມາ 2,7%.

6.2. ປີ 2009 ບໍລິສັດໂທລະຄົມຈີນ ສາຂາຢຸນນານ ຮ່ວມກັບບໍລິສັດ ETL ກໍ່ສ້າງສາຍເຄເບີນຂ້າມແດນລາວ-ຈີນ physical Router ໄລຍະສອງລະບົບສົ່ງແສງໄດ້ຍົກລະດັບປົກຄຸມຈາກ STM 14 ເຖິງ STM 16, ພ້ອມກັນນັ້ນຍັງໄດ້ຮ່ວມມືກັບບໍລິສັດ LTC ສ້າງສາຍເຄເບີນຂ້າມແດນສາກົນທີ່ເປັນ Router ຄູ່, ທັງສອງໂຄງການລ້ວນແຕ່ສຳເລັດໃນປີ 2010.

6.3. ບໍລິສັດໄປສະນີຢຸນນານໄດ້ຈັດຕັ້ງພະນັກງານແຈ້ງພາສີ, ພະນັກງານກວດກາປະຈຳຢູ່ດ່ານບໍ່ຫານ, ເພື່ອກຳແໜ້ນການພັດທະນາກິດຈະການຢ່າງຮອບດ້ານ. ບໍລິສັດໄປສະນີຢຸນນານໄດ້ຕັ້ງໜ້າຂະຫຍາຍໂຄງການສາກົນລາວ-ຈີນ ບົນພື້ນຖານເງື່ອນໄຂອຳນວຍຂອງທາງ R3, ຫຼັງຈາກນັ້ນໄດ້ເຂົ້າຮ່ວມໂຄງການສະໜາມກິລາລາວ ແລະ ອື່ນໆ. ມູນຄ່າການຄ້າຂາເຂົ້າ-ຂາອອກມີ 10 ລ້ານໂດລາ ສຫລ.

6.4. ສອງຝ່າຍໄດ້ເລີ່ມດຳເນີນວຽກງານກະກຽມກໍ່ສ້າງເສັ້ນທາງລົດໄຟ ແຕ່ບໍ່ຫານ ຮອດ ນະຄອນວຽງຈັນທີ່ນອນໃນເສັ້ນທາງລົດໄຟ Tran Asia Railway, ປະຈຸບັນຢູ່ໃນຂັ້ນຕອນ ຄົ້ນຄວ້າສັນຍາຮ່ວມທຶນ.

ໄລຍະທາງລົດໄຟນີ້ຍາວ 421 ກມ, ມີຂົວ 165 ແຫ່ງ, ອຸບມຸງ 69 ແຫ່ງ, ສ້າງເປັນລາງມາດຕະຖານ , ອອກແບບເປັນຄວາມໄວ 120 ກມ/ຊົ່ວໂມງ ສຳລັບລົດຂົນສົ່ງສິນຄ້າ ແລະ 200 ກມ/ຊົ່ວໂມງ ສຳລັບລົດຂົນສົ່ງໂດຍສານ, ຄາດວ່າ 5 ປີຈະສຳເລັດ.

6.5. ເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງຜູ້ໂດຍສານໄປມາທີ່ນັບມື້ເພີ່ມຂຶ້ນ, ບໍລິສັດການບິນຕາເວັນອອກສາຂາຢຸນນານ ໄດ້ເພີ່ມຖ້ຽວການບິນຄຸນໝິງ-ວຽງຈັນ ຈາກ 1 ຖ້ຽວຕໍ່ມື້ເປັນ 2 ຖ້ຽວ/ມື້.

6.6. ບໍລິສັດຂົວທາງຢຸນນານຊັ້ນນີຈຳກັດ ໄດ້ປະຕິບັດໂຄງການຍົກລະດັບທາງນາເຕີຍ-ປາກມອງ ຕອນເໜືອ(ນາເຕີຍ-ເມືອງໄຊ) ຍາວ 78,8 ກມ, ໂຄງການນີ້ໄດ້ເລີ່ມເປັນທາງການໃນວັນທີ 22/06/2009 ໄລຍະກໍ່ສ້າງ 33 ເດືອນ, ປະຈຸບັນໂຄງການດັ່ງກ່າວດຳເນີນໄປດ້ວຍດີ. ວັນທີ 5/3/2010 ບໍລິສັດຂົວທາງຢຸນນານຈຳກັດໄດ້ຮ່ວມກັບລັດຖະບານລາວລົງນາມໃນບົດບັນທຶກຄວາມເຂົ້າໃຈໂຄງການກໍ່ສ້າງເສັ້ນທາງຫຼວງແຫ່ງຊາດເລກ 5 ຢູ່ດິນລາວແຕ່ແຂວງວຽງຈັນ ເຖິງ ແຂວງຊຽງຂວາງ (ນາມອນ-ລາດຮ້ວງ), ປັດຈຸບັນກຳລັງຊຸງນບົດວິພາກຄວາມສາມາດເປັນໄປໄດ້ຂອງໂຄງການ.

7. **ການຮ່ວມມື ດ້ານວິທະຍາສາດ, ການສຶກສາ, ສາທາລະນະສຸກ ແລະ ວັດທະນະທຳ.**

7.1. ພະແນກສຶກສາແຂວງຢູນນານ ແລະ ກະຊວງສຶກສາທິການ-ກິລາ, ສປປ ລາວ ໄດ້ເຊັນບົດບັນທຶກການຮ່ວມມື ແລະ ໄດ້ສ້າງກົນໄກການແລກປ່ຽນ-ຮ່ວມມື ທີ່ໝັ້ນຄົງ. ອຳນາດການປົກຄອງແຂວງຢູນນານ ໄດ້ສະໜອງທຶນການສຶກສາໃຫ້ນັກສຶກສາລາວໄປຮຽນຕໍ່ຢູ່ແຂວງຢູນນານ, ເຊິ່ງນັບຕັ້ງແຕ່ປີ 2008 ເປັນຕົ້ນມາ ລວມມີນັກສຶກສາລາວຈຳນວນ 84 ຄົນໄດ້ຮັບທຶນ ແລະ ໄດ້ຮັບທຶນຂອງລັດຖະບານຈີນ 90 ຄົນ ຮຽນຢູ່ຢຸນນານ. ອຳນາດການປົກຄອງເມືອງພູເອີ້ ແຂວງຢູນນານ ໄດ້ສະໜອງທຶນໃຫ້ແກ່ນັກສຶກສາແຂວງຜົ້ງສາລີ ແລະ ແຂວງຫຼວງພະບາງ ຈຳນວນ 84 ທຶນ. ໃນປີ 2010 ນັກສຶກສາລາວກຳລັງສຶກສາຢູ່ແຂວງຢູນນານ ທັງໝົດ 903 ຄົນ. ປີ 2011 ໂຮງຮຽນມັດທະຍົມຊົນເຜົ່າພູເອີໄດ້ເຊັນສັນຍາຮ່ວມມືກັບໂຮງຮຽນມັດທະຍົມພູຟ້າຜົ້ງສາລີ ເພື່ອແຕ່ງຕັ້ງອາຈານສອນພາສາຈີນ 2 ທ່ານໄປສອນພາສາຈີນໃນໄລຍະເວລາ 3 ປີ, ເມືອງພູເອີໄດ້ຊ່ວຍສ້າງໂຮງຮຽນໃຫ້ແກ່ເດັກດ້ອຍໂອກາດ ຢູ່ ອາຫຼົ່ງຈິງກູຊາ ແຂວງຜົ້ງສາລີ.

- ມະຫາວິທະຍາໄລຢູນນານ, ມະຫາວິທະຍາໄລຊົນເຜົ່າຢູນນານ, ມະຫາວິທະຍາໄລເສດຖະສາດ-ການເງິນຢຸນນານ, ສະຖາບັນຕຳຫຼວດຢຸນນານ, ວິທະຍາໄລຫຼອມໂລຫະຊັ້ນສູງຄຸນໝິງ, ໂຮງຮຽນສ້າງຄູຊັ້ນສູງຊີເໝົາ, ສະຖາບັນເຕັກນິກສິບສອງພັນນາ ແລະ ມະຫາວິທະຍາໄລອື່ນໆ ໄດ້ສ້າງສາຍສຳພັນການແລກປ່ຽນ-ຮ່ວມມືທີ່ໝັ້ນຄົງ ແລະ ຍາວນານກັບມະຫາວິທະຍາໄລແຫ່ງຊາດລາວ, ມະຫາວິທະຍາໄລສຸພານຸວົງ. ມະຫາວິທະຍາໄລວິທະຍາສາດ ແລະ ເຕັກໂນໂລຢີຄຸນໝິງ ໄດ້ຮ່ວມມືກັບມະຫາວິທະຍາໄລແຫ່ງຊາດລາວ ເປີດການສິດສອນນັກສຶກສາ ລະດັບປະລິນຍາໂທ ແລະ ປະລິນຍາເອກສາຂາວິຊາບໍລິຫານ. ແຂວງຢຸນນານໄດ້ເອົາໃຈໃສ່ໃຫ້ໂຮງຮຽນຢູ່ແຂວງຢຸນນານເປີດສອນພາສາລາວ, ພ້ອມນີ້ ກໍ່ໄດ້ເອົາໃຈໃສ່ວຽກງານເຜີຍແຜ່ພາສາ ແລະ ວັດທະນະທຳຈີນຢູ່ລາວ.

7.2. ພາຍໃຕ້ກົບໄກຮ່ວມມືປະສານງານ ລະຫວ່າງ ພາກເໜືອລາວ ແລະ ແຂວງ ຢູນນານ ແຕ່ລະປີ ສະເໜີແຂວງຢູນນານ ຈັດເຝິກອົບຮົມແປພາສາຈີນ-ລາວ 1 ຊຸດຕໍ່ປີ ທີ່ນະຄອນຄຸນໝິງ ສປ ຈີນ ຊຸດລະ 10 ທຶນ, ແຕ່ລະຊຸດ ມີນັກສຳມະນາກອນຝ່າຍຈີນ 3 ທ່ານ, ຝ່າຍລາວ 7 ທ່ານ, ລວມທັງໝົດ 3 ຊຸດ, 30 ທ່ານ. ອີງຕາມຄວາມຮຽກຮ້ອງຕ້ອງການຂອງແຂວງຜົ້ງສາລີ ແຕ່ລະປີໄດເຝິກອົບຮົມ ນາຍແປພາສາຈີນຈຳນວນ 20 ຄົນ ຢູ່ທີ່ວິທະຍາໄລສ້າງຄູຊືເໝົາ ແຂວງຢູນນານ. ປະຈຸບັນນີ້, ມະຫາວິທະຍາໄລຈຳນວນ 4 ແຫ່ງ ຢູ່ແຂວງຢູນນານ ໄດ້ເປີດຫຼັກສູດສອນພາສາລາວ ຫຼື ນຳເອົາ ພາສາລາວຈັດເຂົ້າຫຼັກສູດພາສາຕ່າງປະເທດປະເພດ 1.

7.3. ໄດ້ເລີ່ມເຄື່ອນໄຫວໂຄງການເຝົ້າລະວັງພະຍາດຕາມຂົງເຂດແມ່ນ້ຳຂອງຊາຍແດນລາວຈີນ. ສອງຝ່າຍໄດ້ດຳເນີນການແລກປ່ຽນບົດຮຽນນຳກັນຢ່າງກວ້າງຂວາງດ້ານການກັນ ແລະ ຄວບຄຸມຕິດຕໍ່ຕາມຊາຍແດນລາວ-ຈີນເຊັ່ນ: ຊາຍແດນເມືອງຫຼ້າ-ແຂວງຫຼວງນ້ຳທາ, ຊຽງຮຸ່ງ-ເມືອງສິງ, ເມືອງຫຼ້າ-ແຂວງຜົ້ງສາລີ, ພ້ອມກັນນັ້ນ ກໍ່ໄດ້ສະເໜີແຜນປະຕິບັດວຽກງານການກັນ ແລະ ຄວບຄຸມພະຍາດຕິດຕໍ່ຕາມຊາຍແດນທີ່ແທດເໝາະ ແລະ ສາມາດປະຕິບັດຮ່ວມກັນໄດ້.

7.4. ພາຍໃຕ້ກົນໄກການປະສານງານລະຫວ່າງພາກເໜືອລາວ ແລະ ແຂວງຢູນນານຄະນະກຳມະການພັດທະນາແລະປະຕິຮູບຂອງແຂວງຢູນນານ ໄດ້ຈັດການຝຶກອົບຮົມໃຫ້ແກ່ວິຊາການວາງແຜນພັດທະນາເສດຖະກິດພາກເໜືອຂອງລາວ 3 ຊຸດ ໄດ້ຝຶກອົບຮົມລັດຖະກອນລາວທັງໝົດ 60 ທ່ານ.

7.5. ເດືອນ 10 ປີ 2010 ການນຳຂອງກະຊວງວັດທະນະທຳລາວ ໄດ້ເຂົ້າຮ່ວມກອງປະຊຸມແລກປ່ຽນວັດທະນະທຳຢູນນານ 10+1 ທີ່ຄຸນໝິງ ແລະໄດ້ແລກປ່ຽນກັບຝ່າຍຢູນນານ ເລື່ອງການຮ່ວມມືດ້ານສິລະປະສຶກສາ ການປົກປັກຮັກສາແລະສືບທອດມໍລະດົກດ້ານວັດທະນະທຳ. ວັນທີ 10-12 ເດືອນມິຖຸນາ ປີ 2010 ເມືອງພູເອີ ແຂວງຢູນນານ ໄດ້ຈັດງານວັດທະນະທຳແລະສິລະປະຊົນເຜົ່າ ເມືອງພູເອີ ຄັ້ງທີ3 ແລະໄດ້ເຊີນຄະນະສິລະປະ ແຂວງຜົ້ງສາລີ ຈຳນວນ 25 ຄົນ ເຂົ້າຮ່ວມງານດັ່ງກ່າວ.

**8. ການຮ່ວມມືການຄຸ້ມຄອງຊາຍແດນ ແລະ ດ່ານ.**

8.1. ສອງຝ່າຍໄດ້ເລັ່ງມືກໍ່ສ້າງ ແລະ ເຊື່ອມຕໍ່ດ່ານສາກົນ 2 ດ່ານ ບໍ່ເຕນ-ບໍ່ຫານ, ລານຕຸຍ-ເມືອງຄັງ ພາຍໃຕ້ລະບຽບ ແລະ ຂໍ້ຕົກລົງທີ່ກ່ຽວຂ້ອງຂອງສອງປະເທດ, ປັບປຸງອຸປະກອນຮັບໃຊ້ຕ່າງໆ, ປັບປຸງລະບົບການກວດກາຄົນຜ່ານດ່ານ, ແນໃສ່ຍົກລະດັບວຽກງານການຜ່ານດ່ານ, ພ້ອມດຽວກັນນັ້ນ ໜ່ວຍງານຄຸ້ມຄອງດ່ານຂອງສອງຝ່າຍ ໄດ້ປະຕິບັດຕາມສັນຍາ ວ່າດ້ວຍລະບົບຊາຍແດນຢ່າງເຂັ້ມງວດ, ເພີ່ມທະວີການແລກປ່ຽນຂໍ້ມູນຂ່າວສານ, ປັບປຸງການຄຸ້ມຄອງຊາຍແດນ ແລະດຳເນີນວຽກງານຊາຍແດນໃຫ້ລາບລື່ນ.

8.2. ສອງຝ່າຍໄດ້ຮ່ວມມືກັນສະກັດກັ້ນສິນຄ້າລັກລອບພາສີ ແລະສິນຄ້າຕ້ອງຫ້າມ. ຮ່ວມມືກັນກວດກາ ສັດ ພືດ ແມງໄມ້ ທີ່ເປັນພະຍາດ, ເຮັດສຳເລັດ "ຂໍ້ຕົກລົງ ວ່າດ້ວຍການກວດກາພະຍາດສາລີຂອງ ສປປ ລາວ ນຳເຂົ້າ ສປ ຈີນ". ເພີ່ມທະວີການຮ່ວມມືສະກັດກັ້ນຢາເສບຕິດຄະດີຂ້າມຊາດ ການກໍ່ຈະລາຈົນ ແລະ ອື່ນໆ. ເອົາໃຈໃສ່ໂຄສະນາອົບຮົມລະບຽບກົດໝາຍ ວ່າດ້ວຍການເຂົ້າ-ອອກເມືອງ ຕ້ານການລັກລອບເຂົ້າ-ອອກເມືອງ.

8.3. นับตั้งแต่ปี 2010 ການຂໍວີຊາຢູ່ດ່ານບໍ່ທ່ານໄດ້ເພີ່ມຂຶ້ນຫຼາຍ ຄົນຕ່າງປະເທດຂໍວີຊາຢູ່ດ່ານທັງໝົດ 5642 ຄົນ ທຽບໃສ່ປີ 2009 ເພີ່ມຂຶ້ນ 16%. ປີ 2010 ຕຳຫຼວດດ່ານຂອງສອງຝ່າຍໄດ້ປະຊຸມນຳກັນ 22ຄັ້ງ, ລະບົບການຮ່ວມມືຂອງຕຳຫຼວດດ່ານມີຄວາມເຂັ້ມແຂງຂຶ້ນ. ການຮ່ວມມືຂອງຕຳຫຼວດສອງຝ່າຍ ເລື່ອງການຮັບເອົານັກໂທດກັບຄືນປະເທດ ແມ່ນເຮັດໄດ້ດີພໍສົມຄວນ.

8.4. ພາກສ່ວນກ່ຽວຂ້ອງດ້ານການປ້ອງກັນຊາຍແດນຂອງທັງສອງຝ່າຍນຳໃຊ້ມາດຕະການ ເພື່ອເພີ່ມທະວີການຄຸ້ມຄອງຄົນ ແລະ ພາຫະນະເຂົ້າອອກເມືອງ, ເອົາໃຈໃສ່ກຳນົດມາດຕະການທີ່ອຳນວຍຄວາມສະດວກແກ່ປະຊາຊົນ. ປີ 2010 ສອງຝ່າຍໄດ້ກວດຄົນເຂົ້າເມືອງທັງໝົດ 1 ລ້ານກວ່າເທື່ອຄົນ, ອັດຕາການຖືບັດມີ 100%. ພ້ອມກັນນັ້ນ, ເພື່ອເຮັດໃຫ້ມີການພັດທະນາທີ່ດີຂຶ້ນ ສອງຝ່າຍຄວນປັບປຸງມາດຕະການກວດກາຕາມດ່ານຊາຍແດນ "ດ່ານລານຕຸຍ-ເມືອງລັງ" ໃຫ້ດີຂຶ້ນ. ປີ 2010 ລະຫວ່າງພາກສ່ວນກ່ຽວຂ້ອງດ້ານການປ້ອງກັນຊາຍແດນຂອງທັງສອງຝ່າຍທຸກຂັ້ນ ໄດ້ຈັດກອງປະຊຸມພົບປະກັນຈຳນວນ 62 ຄັ້ງ ເພື່ອດຳເນີນການປຶກສາຫາລືແກ້ໄຂບັນຫາທີ່ເກີດຂຶ້ນ ໃນການຄຸ້ມຄອງວຽກງານ.

8.5. ແຂວງຢູ່ນານ ໄດ້ເຊັນບົດບັນທຶກກັບ ແຂວງຫຼວງນ້ຳທາ, ຜົ້ງສາລີ, ອຸດົມໄຊ, ບໍ່ແກ້ວ ແລະ ຫຼວງພະບາງ ວ່າດ້ວຍລະບົບການຮ່ວມມືວຽກງານການຕ່າງປະເທດ ລະຫວ່າງແຂວງຢູນນານ ສປ ຈີນ ແລະ 5 ແຂວງພາກເໜືອ ຂອງ ສປປ ລາວ, ແນໃສ່ການໄປມາຫາສູ່, ຮ່ວມມືດ້ານເສດຖະກິດການຄ້າ, ການຄຸ້ມຄອງຊາຍແດນ ແລະ ວຽກງານການປົກປັກຮັກສາຊາຍແດນ.

8.6. ສອງຝ່າຍໄດ້ໃຫ້ການຮ່ວມມືກັບລັດຖະບານຂອງຕົນ ເຮັດສຳເລັດວຽກງານກວດກາຊາຍແດນຮ່ວມຄັ້ງທີ1 ລະຫວ່າງ ລາວ-ຈີນ ແລະ ໄດ້ປັກຫຼັກໝາຍຊາຍແດນທັງໝົດ 103 ຫຼັກໝາຍ ເພື່ອເຮັດໃຫ້ທິດເນັ້ງຊາຍແດນມີຄວາມຊັດເຈນຂຶ້ນກວ່າເກົ່າ ແລະ ມີຄວາມໝາຍສຳຄັນ ໃນການເພີ່ມທະວີການຮ່ວມມື, ການຄຸ້ມຄອງ ແລະ ປົກປ້ອງເສັ້ນຊາຍແດນຂອງສອງປະເທດໃຫ້ມີສັນຕິພາບ.

9. **ການຮ່ວມມືດ້ານ ການລະດົມທຶນ.**

9.1. ໄດ້ເຊັນບົດບັນທຶກຊ່ວຍຈຳກັບທະນາຄານຟູດຽນ (FDB) ເພື່ອຮ່ວມມືກັນໃນຫຼາຍດ້ານເປັນຕົ້ນການອຳນວຍຄວາມສະດວກທາງດ້ານການຄ້າ, ການບໍລິການດ້ານການເງິນ, ແລະ ການສະໜອງທຶນໃຫ້ແກ່ນັກລົງທຶນຂອງສອງຊາດລາວ-ຈີນ. ໃນປີ 2010 ໄດ້ມີການເຊັນສັນຍາເປີດຫ້ອງການຜູ້ຕາງໜ້າ FDB ປະຈຳ ສປປ ລາວ, ເດືອນ 6 ປີ 2011 ໄດ້ເຊັນສັນຍາການເປີດບັນຊີສະກຸນເງິນໂດລາ, ຢວນ ແລະ ກີບ ເພື່ອການເຮັດທຸລະກຳຮ່ວມກັນ, ໃນທ້າຍເດືອນ 5/2011 ໄດ້ເປີດປ້າຍອາງອັດຕາແລກປ່ຽນເງິນຢວນ-ກີບ ຢ່າງເປັນທາງການ.

9.2. ການຮ່ວມມື ລະຫ່ວາງ ທະນາຄານພັດທະນາລາວ (LDB) ສາຂາຫຼວງນ້ຳທາກັບທະນາຄານພັດທະນາກະສິກຳ ສປ ຈີນ (APBC) ສາຂາບໍ່ຫານ: ພາຍຫຼັງສອງຝ່າຍໄດ້ເຊັນສັນຍາຮ່ວມມືກ່ຽວກັບການເປີດບັນຊີເງິນຝາກ ເພື່ອຊຳລະສະສາງ ເປັນສະກຸນເງິນຢວນ ແລະ ໂດລາ ສຫລ ແລ້ວ, APBC ໄດ້ຕິດຕັ້ງລະບົບ Internet-Banking ພ້ອມທັງເຝິກອົບຮົມໃຫ້ພະນັກງານຂອງ LDB ເພື່ອໃຊ້ລະບົບດັ່ງກ່າວ, ປະຈຸບັນໄດ້ໃຫ້ບໍລິການລູກຄ້າຮ່ວມກັນເປັນປົກກະຕິ ໂດຍສະເພາະ

ການໂອນເງິນລະຫ່ວາງກັນ, ການຊື້-ຂາຍເງິນຕາ ການສະໜອງເງິນສົດ ແລະ ການບໍລິການລູກຄ້າຮ່ວມກັນ. ນອກນີ້ຍັງມີການແລກປ່ຽນບົດຮຽນເຊິ່ງກັນເປັນປົກກະຕິ.

9.3. ການຮ່ວມມື ລະຫ່ວາງ ທະນາຄານພັດທະນາລາວ (LDB) ກັບທະນາຄານພັດທະນາແຫ່ງຊາດຈີນ (CDB) ສາຂາຄຸນມິງ : ພາຍຫຼັງສອງຝ່າຍໄດ້ເຊັນສັນຍາການຊໍາລະສະສາງຊາຍແດນໂດຍໃຊ້ສະກຸນເງິນທ້ອງຖິ່ນແລ້ວ, ທັງສອງຍັງໄດ້ເຊັນສັນຍາຮ່ວມກັນ ກ່ຽວກັບການສະໜອງສິນເຊື່ອເປັນສະກຸນເງິນຢວນ ເພື່ອຮອງຮັບໃຫ້ແກ່ການສົ່ງ-ຮັບ ຂໍ້ມູນທຸລະກິດທາງດ້ານການເງິນລະຫ່ວາງກັນ, ພ້ອມກັນນັ້ນ CDB ຍັງໄດ້ຕິດຕັ້ງລະບົບ CPIS ໂດຍໃຊ້ສັນຍານ Internet ໃຫ້ LDB ປະຈຸບັນສາມາດ ໃຫ້ບໍລິການ ແລະ ໂອນເງິນຜ່ານລະບົບດັ່ງກ່າວແລ້ວ.

**10. ການຈັດຕັ້ງຜັນຂະຫຍາຍ << ແຜນແມ່ບົດພັດທະນາເສດຖະກິດພາກເໜືອລາວ>>**

ຝ່າຍລາວໄດ້ຫັນແຜນແມ່ບົດເປັນແຜນງານ, ແລະ ເປັນໂຄງການລະອຽດເຂົ້າໃນແຜນ 5 ປີ ຄັ້ງທີ VII ໂດຍອີງໃສ່ຈຸດພິເສດຂອງຂະແໜງການ ແລະ ທ້ອງຖິ່ນແລ້ວ.

11. ສອງຝ່າຍເຫັນເປັນເອກະສັນກັນວ່າ ໃນໄລຍະສອງປີຜ່ານມານີ້ ບັນດາວຽກງານການຮ່ວມມືດ້ານຕ່າງໆ ແມ່ນໄດ້ຮັບຜົນສໍາເລັດຢ່າງເຫັນໄດ້ຊັດ. ແຕ່ຢູ່ບົນໝາກຜົນສໍາເລັດອັນດີງາມນີ້ ກໍເຫັນວ່າບາງພາກສ່ວນໂຄງການ ຍັງຊັກຊ້າໃນການປະຕິບັດໂຄງການ, ບາງເທື່ອກໍ່ຊຸກຍູ້ໃຫ້ດໍາເນີນໄປໄດ້ຍາກ. ດ້ານການຊຸກຍູ້ຄືນ, ວັດຖຸເຂົ້າອອກຕາມຊາຍແດນຍັງພົບອຸປະສັກຫຼາຍປະການ ການຮ່ວມມືໃນບາດກ້າວຕໍ່ໄປນັ້ນ ເຫັນວ່າສອງຝ່າຍຮ່ວມກັນເອົາໃຈໃສ່ຄົ້ນຄວ້າແກ້ໄຂບັນຫາຕື່ມອີກ, ເອົາໃຈໃສ່ຊຸກຍູ້ວຽກງານໂຄງການເພື່ອຮີບຮ້ອນໃຫ້ບັນດາໂຄງການໄດ້ປະຕິບັດຢ່າງລຸ່ງໄຫຼ.

**II. ທິດທາງແຜນການຮ່ວມມືສອງຝ່າຍ ໃນຕໍ່ໜ້າ.**

12. ສືບຕໍ່ແລກປ່ຽນຢ້ຽມຢາມລະຫວ່າງການນໍາຂັ້ນສູງຂອງຢຸນນານ ແລະ ລາວ, ສະໜັບສະໜູນໃຫ້ທ້ອງຖິ່ນຂອງລາວ ແລະ ຢຸນນານ ແລກປ່ຽນລະຫ່ວາງພັກດ້ວຍກັນ, ບຸກເບີກຊ່ອງທາງແລກປ່ຽນລະຫ່ວາງ ສະພາຜູ້ແທນຂອງລາວ-ສະພາຜູ້ແທນແຂວງຢຸນນານ, ສະພາທີ່ເປີກສາການເມືອງແຂວງຢຸນນານ-ແນວລາວສ້າງຊາດ ລິງເລີກການແລກປ່ຽນຢ່າງເປັນຮູບປະທໍາໃຫ້ແຂວງ ເມືອງແຮກສ່ຽວ, ສ້າງພື້ນຖານຮ່ວມມືມິດຕະພາບຮອບດ້ານ.

**13. ດ້ານການຄ້າ ແລະ ການລົງທຶນ**

13.1. ທັງສອງຝ່າຍເຫັນດີເປີດກອງປະຊຸມລະຫວ່າງໜ່ວຍງານການຄ້າ ແລະ ການລົງທຶນຂອງ 9 ແຂວງພາກ ເໜືອລາວ ກັບແຂວງຢຸນນານເປັນປະຈໍາແຕ່ລະປີ ເພື່ອເພີ່ມທະວີການຮ່ວມມືດ້ານການຄ້າ ແລະ ການລົງທຶນ, ອໍານວຍຄວາມສະດວກໃນການນໍາເຂົ້າ ແລະ ສົ່ງອອກສິນຄ້າ, ແຈ້ງ ແລະ ເຜີຍແຜ່ລະບຽບການ, ຂໍ້ຕົກລົງສອງຝ່າຍ, ແນໃສ່ປັບປຸງກົນໄກແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນ ໃນຂົງເຂດວຽກງານການຄ້າ ແລະ ການລົງທຶນ.

13.2. ສອງຝ່າຍເຫັນດີນໍາໃຊ້ທຸກມາດຕະການທີ່ມີທ່າແຮງ ຮ່ວມກັນຊຸກຍູ້ຂະຫຍາຍການຄ້າລາວ-ຢຸນນານ ລວມທັງການຄ້າຊາຍແດນ, ສູ້ຊົນໃຫ້ການຄ້າສອງຝ່າຍບັນລຸໄດ້ 300 ລ້ານ ໂດລາ ສຫລ ຂຶ້ນໄປໃນປີ 2012.

13.3. ຊຸກຍູ້ໂຄງການຮ່ວມມືສອງຝ່າຍ. ພາຍໃຕ້ເງື່ອນໄຂດຽວກັນ ສປປ ລາວຈະໃຫ້ບູລິມະສິດວິສາຫະກິດຢຸນນານຮັບເໝົາ ເຊິ່ງສາມາດນຳໃຊ້ຮູບແບບນຳເອົາທຶນມາຮັບເໝົາເຊັ່ນ: ຮູບແບບ BOT, BT. ຜ່ານການຮ່ວມມືກັນອີກກ້າວໜຶ່ງ ໂອນເຕັກນິກການນຳໃຊ້ຂອງຂີງເຂດພັດທະນາແຫຼ່ງທຶນ, ເພີ່ມວຽກເຮັດງານທຳໃຫ້ລາວ, ເພີ່ມລາຍຮັບໃຫ້ປະຊາຊົນ ແລະ ລາຍໄດ້ພາສີ-ອາກອນໃຫ້ລັດຖະບານ,: ເພີ່ມທະວີຄວາມສາມາດກຸ້ມຕົນເອງ ແລະ ຄວາມສາມາດສົ່ງອອກຂອງເສດຖະກິດລາວ.

13.4. ທັງສອງຝ່າຍເຫັນດີຊຸກຍູ້ໃຫ້ນັກທຸລະກິດຈີນມາລົງທຶນກ່ຽວກັບໂຄງການປຸງແຕ່ງ ແລະ ຜະລິດເຄື່ອງວັດຖຸກໍ່ສ້າງ, ເຄື່ອງໃຊ້ໄຟຟ້າເອເລັກໂຕຼນິກ, ເຄື່ອງໃຊ້ສອຍປະຈຳວັນ, ໂຮງງານອຸດສາຫະກຳເຄື່ອງນຸ່ງຫົ່ມ (ແຜ່ນແພ, ຕັດຫຍິບ), ໂຮງງານປຸງແຕ່ງເມັດປະລາສະຕິກ, ໂຮງງານຜະລິດເຈັ້ຍຢູ່ແຂວງວຽງຈັນ ຫຼື ແຂວງໃດທີ່ເຫັນວ່າມີເງື່ອນໄຂ ເພື່ອທົດແທນການນຳເຂົ້າຈາກປະເທດທີ 3. ທັງສອງຝ່າຍເຫັນດີສະໜັບສະໜູນ ຢຸນນານເຂົ້າມາລົງທຶນສ້າງເຂດເສດຖະກິດພິເສດ 3 ຫຼ່ຽມຄຳເມືອງຕົ້ນເຜິ້ງ ແລະ ເຂດສົ້ນຂົວແມ່ນ້ຳຂອງແຫ່ງໃໝ່ (ຫ້ວຍຊາຍ-ຊຽງຂອງ) ໃນຕໍ່ໜ້າ.

14. **ການຮ່ວມມືດ້ານກະສິກຳ, ປ່າໄມ້ ແລະ ປູກພືດທົດແທນ**

14.1. ສືບຕໍ່ຄຸ້ມຄອງ, ສົ່ງເສີມ ແລະ ກໍ່ສ້າງພື້ນຖານໂຄງລ່າງ ຂອງ ສວນສາທິດວິທະຍາສາດເຕັກນິກກະສິກຳອຸດົມໄຊ. ໂດຍຖືເອົາປະສົບການຂອງສວນສາທິດວິທະຍາສາດເຕັກນິກອຸດົມໄຊ, ເພື່ອເປັນການເສີມຂະຫຍາຍການຮ່ວມມືໃນຂະແໜງກະສິກຳ ລະຫວ່າງສອງຝ່າຍ. ໂດຍຜ່ານການກໍ່ສ້າງສວນສາທິດກະສິກຳ, ເພື່ອເຜີຍແຜ່ມາດຕະການດ້ານການຕັດຕໍ່ແນວພັນພືດສະບຽງອາຫານ, ພືດເສດຖະກິດໃຫ້ປະຊາຊົນ.

14.2. ໂດຍອາໄສພື້ນຖານໃນການສ້າງ 4 ເຂດຊາຍແດນໃນການກໍ່ສ້າງສະຖານີກວດກາ ແລະ ກັກກັນສັດ, ຊຸກຍູ້ການຮ່ວມມືຊາຍແດນລາວ ແລະ ບັນດາພາກສ່ວນອື່ນໆ ສ້າງເປັນ " ສະຖານີກວດກາ ແລະ ກັກກັນພະຍາດສັດຕາມຊາຍແດນ". ສືບຕໍ່ຊຸກຍູ້ການເຝິກອົບຮົມເຕັກນິກການຄຸ້ມຄອງວຽກງານກວດກາ ແລະ ກັກກັນພະຍາດພືດ ແລະ ສັດ ຢູ່ແຂວງຜົ້ງສາລີ ແລະ ແຂວງບໍ່ແກ້ວ, ເພື່ອເປັນການເອົາໃຈໃສ່ການພັດທະນາວຽກງານສັດຕະວະແພດຂີງເຂດຊາຍແດນ.

14.3. ຫ້ອງການກະສິກຳແຂວງຢຸນນານ ເຫັນດີສືບຕໍ່ຊອກເງິນທຶນກັບບັນດາແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງລັດຖະບານຈີນ ເພື່ອເຝິກອົບຮົມວຽກງານສະເພາະດ້ານໃຫ້ພາກເໜືອລາວເຊັ່ນ: ການປູກຝັງ, ການລ້ຽງສັດ ແລະ ອື່ນໆ, ເພື່ອຊ່ວຍເຫຼືອຝ່າຍລາວຍົກລະດັບຄວາມສາມາດເຕັກນິກດ້ານການປູກຝັງ.

14.4. ທັງສອງຝ່າຍເຫັນດີສືບຕໍ່ສ້າງກົນໄກຮ່ວມມືປະສານງານກ່ຽວກັບຂະແໜງປ່າໄມ້ ຕາມເຂດຊາຍແດນ, ກຳນົດເວລາ ປະຊຸມເພີ່ມຄວາມເຂັ້ມແຂງ ໃຫ້ວຽກງານການປ້ອງກັນພະຍາດ ແລະ ສັດຕູພືດໃນປ່າໄມ້ເຂດຊາຍແດນ (ລວມທັງແຂວງຫຼວງນ້ຳທາ, ອຸດົມໄຊ ແລະ ຜົ້ງສາລີ). ສືບຕໍ່ຮ່ວມກັນປົກປ້ອງຮ່ວມເຂດສະຫງວນທຳມະຊາດຊາຍແດນ, ເພີ່ມທະວີການຮ່ວມມືແລກປ່ຽນປ້ອງກັນແມງໄມ້, ເພື່ອພ້ອມກັນຮັກສາຊວະນາໆພັນ. ສົ່ງເສີມການຮ່ວມມືດ້ານທຶນຮອນຂອງຂະແໜງປ່າໄມ້,

ພັດທະນາຜະລິດຕະພັນໄມ້ໄຜ່, ປະເພດໄມ້ທີ່ມີລາຄາແພງ, ສົ່ງເສີມປູກປະເພດເຄືອໄມ້, ເພື່ອສະໜອງວັດຖຸດິບ ເຂົ້າໂຮງງານປຸງແຕ່ງ.

14.5. ທັງສອງຝ່າຍເຫັນດີສືບຕໍ່ກົນໄກປ້ອງກັນໄຟໄໝ້ປ່າ ຢູ່ລາວ ແລະ 3 ແຂວງ 6 ເມືອງ ທີ່ຕິດກັບແຂວງຢຸນນານໃຫ້ຫຼາຍຂຶ້ນ, ກໍານົດໄລຍະເວລາຈັດກອງປະຊຸມ, ລົງເລິກກ່ຽວກັບບັນຫາການຮ່ວມມືໃນການປ້ອງກັນໄຟໄໝ້ປ່າ ແລະ ການປົກປັກຮັກສາສິ່ງແວດລ້ອມຢູ່ເຂດຊາຍແດນ.

14.6. ສອງຝ່າຍເຫັນດີຮ່ວມມື ແລະ ລົງທຶນໂຄງການແຜນພັດທະນາກະສິກໍາ 9 ແຂວງພາກເໜືອລາວ ແລະ ພັດທະນາກະສິກໍາປ່າໄມ້. ສົ່ງເສີມເພີ່ມທະວີການພົວພັນຮ່ວມມື ລະຫວ່າງ ແຂວງຜົ້ງສາລີ ແລະ ເມືອງພູເອີ ແຂວງຢຸນນານ ແລະ ຂະແໜງກະສິກໍາກົ່ງແຂວງສິບສອງພັນນາ, ລົງເລິກຮ່ວມມືດ້ານເງິນທຶນ, ຂໍ້ມູນຂ່າວສານ, ເຕັກນິກວິທະຍາສາດ, ຕະຫຼາດ ແລະ ອື່ນໆ.

14.7. ສອງຝ່າຍເຫັນດີຊຸກຍູ້ການຮ່ວມມືລະຫວ່າງ ສະຖາບັນຄົ້ນຄວ້າກະສິກໍາ ແລະ ປ່າໄມ້ແຫ່ງຊາດ ແລະ ສະຖາບັນຄົ້ນຄວ້າກະສິກໍາແຂວງຢຸນນານ. ຮ່ວມກັນກໍານົດແຜນງານ, ເພີ່ມທະວີການຮ່ວມມືທີ່ທັງສອງຝ່າຍໃຫ້ຄວາມສົນໃຈຄົ້ນຄວ້າກ່ຽວກັບວຽກງານຕ່າງໆຂອງສອງຝ່າຍ.

14.8. ສອງຝ່າຍຊຸກຍູ້ການຈັດຕັ້ງປະຕິບັດເນື້ອໃນບົດບັນທຶກ ລະຫວ່າງ ສິບສອງພັນນາກັບຄະນະກໍາມາທິການຮ່ວມມືລາວ-ຈີນ ແລະ 5 ແຂວງພາກເໜືອລາວ ໃນເດືອນມິຖຸນາ 2011.

14.9. ສອງຝ່າຍເຫັນດີສືບຕໍ່ຊຸກຍູ້ການປູກພືດທົດແທນ ແລະ ດ້ານອື່ນໆໃນສັນຍາ, ສະເໜີລັດຖະບານສອງຝ່າຍຮີບຮ້ອນເຊັນສັນຍາຂອບການຮ່ວມມືປູກພືດທົດແທນ. ສອງຝ່າຍເຫັນດີຢັ້ງຢືນ ໃຫ້ບໍລິສັດປູກພືດທົດແທນ ທີ່ມາປະຕິບັດງານຢູ່ພາກເໜືອລາວ, ຝ່າຍລາວອໍານວຍຄວາມສະດວກໃຫ້ວິສາຫະກິດຢຸນນານ ທີ່ຖືກກົດໝາຍໃນເນື້ອທີ່ດິນ, ກໍາລັງແຮງງານໃນການນໍາໃຊ້, ພາສີ, ວີຊາການເຂົ້າອອກດ່ານ, ອຸປະກອນ ແລະ ຍົກເວັ້ນພາສີເຂົ້າອອກຂອງເຄື່ອງຈັກທີ່ທັງສອງຝ່າຍຕົກລົງເຫັນດີນໍາກັນ. ຊຸກຍູ້ຄະນະກໍາມະການປາບປາມຢາເສບຕິດຂອງລັດຖະບານສອງຝ່າຍ ສ້າງຕັ້ງກົນໄກຄຸ້ມຄອງວຽກງານປູກພືດທົດແທນການປູກຝິ່ນພາກເໜືອລາວ ໃນການນໍາພາເປັນເອກະພາບ ແລະ ຄຸ້ມຄອງລວມສູນ.

**15. ການຮ່ວມມືດ້ານພະລັງງານ ແລະ ບໍ່ແຮ່.**

15.1. ສອງຝ່າຍເຫັນດີຊຸກຍູ້ບັນດາບໍລິສັດຂອງຢຸນນານ ທີ່ເຂົ້າມາລົງທຶນດ້ານພະລັງງານໄຟຟ້າ ແລະ ບໍ່ແຮ່ ຢູ່ ສປປ ລາວ ໃຫ້ເອົາໃຈໃສ່ໃນການປະຕິບັດລະບຽບກົດໝາຍຂອງ ສປປ ລາວ ແລະ ສັນຍາທີ່ທັງສອງຝ່າຍໄດ້ເຊັນກັນຢ່າງເຂັ້ມງວດ ເປັນຕົ້ນແມ່ນການມອບພັນທະຕ່າງໆ ໃຫ້ລັດຖະບານລາວ, ການລາຍງານຄວາມຄືບໜ້າຂອງໂຄງການ.

15.2. ສອງຝ່າຍສະໜັບສະໜູນໃຫ້ບໍລິສັດຕາຂ່າຍໄຟຟ້າຢຸນນານ ເລັ່ງລັດຈັດຕັ້ງປະຕິບັດໂຄງການປັບປຸງກໍ່ສ້າງຕາຂ່າຍໄຟຟ້າລາວ. ບົນພື້ນຖານການຊຸກຍູ້ໂຄງການຕາຂ່າຍໄຟຟ້າລາວເພື່ອໃຫ້ດໍາເນີນໂຄງການສົ່ງໄຟຟ້າເຂົ້າໂຄງການທາງລົດໄຟເຂົ້າໂຄງການທາງລົດໄຟລາວ-ຈີນ ແລະວຽກງານທີ່ກ່ຽວຂ້ອງໄດ້ຢ່າງທັນການ.

**16. ຮ່ວມມືດ້ານທ່ອງທ່ຽວ**

16.1. ທັງສອງຝ່າຍເຫັນດີສືບຕໍ່ຊຸກຍູ້ໂຄງການສ້າງໂຮງແຮມ 5 ດາວ ຢູ່ແຂວງຫຼວງພະບາງ ໃຫ້ສຳເລັດ ເຊິ່ງໄດ້ວາງສີລາລຶກແລ້ວໃນວັນທີ 25/04/2011. ນັກລົງທຶນຕ່າງປະເທດຕ້ອງກໍ່ສ້າງໂຮງແຮມລະດັບສູງ ຕາມກົດໝາຍທ່ອງທ່ຽວຂອງລາວເພື່ອເປັນເງື່ອນໄຂດຶງດູດນັກລົງທຶນຈີນ ເຂົ້າມາລາວນັບມື້ນັບຫຼາຍຂຶ້ນ.

16.2. ສອງຝ່າຍເຫັນດີເພີ່ມທະວີການຮ່ວມມືກັນວາງແຜນ ແລະ ໂຄສະນາເສັ້ນທາງທ່ອງທ່ຽວ, ຖືເອົາສາຍນ້ຳຄຳ ແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ, ແລວທາງ R3, ເສັ້ນທາງອ້ອມຮອບເຂດ ທອງທ່ຽວ 4 ຫຼ່ຽມຄຳ ເປັນເສັ້ນທາງທ່ອງທ່ຽວທີ່ຢຸນນານຈີນ-ພາກເໜືອລາວຕ້ອງຮ່ວມກັນໂຄສະນາ.

16.3. ສອງຝ່າຍເອົາໃຈໃສ່ຄົ້ນຄ້ວາແລກປ່ຽນ, ພະຍາຍາມສ້າງເງື່ອນໄຂອຳນວຍ, ໂດຍຜ່ານການສ້າງກົນໄກແກ້ໄຂສຸກເສີນຕໍ່ອຸປະຕິເຫດທີ່ເກີດຂຶ້ນກ່ຽວກັບການທ້ອງທ່ຽວ, ທັງສອງຝ່າຍຈະຕ້ອງພະຍາຍາມແກ້ໄຂບັນຫາ ແລະ ຂໍ້ຫຍຸ້ງຍາກທີ່ນັກທ່ອງທ່ຽວ ແລະ ບໍລິສັດທ່ອງທ່ຽວ ປະສົບຢູ່ໃນຂົງເຂດຂອງຢຸນນານ ແລະ ພາກເໜືອລາວ, ພ້ອມທັງແຈ້ງສະພາບການແກ້ໄຂບັນຫາໃຫ້ພາກສ່ວນທ່ອງທ່ຽວຂອງທັງສອງຝ່າຍຊາບ.

16.4. ຮ່ວມມືກັນຊຸກຍູ້ການຂະຫຍາຍຕະຫຼາດທ້ອງທ່ຽວ ແລະ ການບໍລິການຂໍ້ມູນຕະຫຼາດ ເທື່ອ ລະກ້າວ, ເຊື່ອມຕໍ່ Website ທ້ອງທ່ຽວທາງການຂອງແຂວງຢຸນນານ ແລະ ແຂວງພາກເໜືອ ຂອງລາວໃຫ້ປະກົດເປັນຈິງ ເພື່ອໃຫ້ທັງສອງຝ່າຍສາມາດມີຂໍ້ມູນແຫຼ່ງທ້ອງທ່ຽວ

16.5. ຝ່າຍລາວສະເໜີໃຫ້ຝ່າຍຈີນປະຕິບັດຄືນເລື່ອງການອອກວີຊາກັບດ່ານ

ຕາມທີ່ເຄີຍປະຕິບັດຜ່ານມາ ເພາະປະຈຸບັນ ຝ່າຍຈີນໄດ້ປິດການອອກວີຊາກັບດ່ານແລ້ວ ແລະ ຝ່າຍຈີນກໍ່ຍິນດີຮັບເອົາໄປພິຈາລະ ນາ ເພື່ອຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງຂອງຕົນ.

16.6. ຢຸນນານເຫັນດີເຝິກອົບຮົມ ໃຫ້ບໍລິສັດທ້ອງທ່ຽວ ແລະ ຜູ້ຄຸ້ມຄອງການທ້ອງທ່ຽວຂອງພາກເໜືອລາວ ຢ່າງມີແຜນການ, ຍົກລະດັບຄວາມຮູ້ດ້ານຜະລິດຕະພັນທ້ອງທ່ຽວຂອງເຂດພາກເໜືອລາວ ແລະ ແຂວງຢຸນນານ ໃຫ້ແກ່ພະແນກທ້ອງທ່ຽວ ບັນດາແຂວງພາກເໜືອລາວ. ນີ້ແມ່ນເພື່ອສ້າງພື້ນຖານອັນ ດີໃຫ້ແກ່ການທ້ອງທ່ຽວຂອງສອງຝ່າຍ.

16.7. ຝ່າຍຢຸນນານຍິນດີຄົ້ນຄວ້າບັນຫາທີ່ລາວສະເໜີໃຫ້ແຂວງຢຸນນານ ຊ່ວຍທຶນເພື່ອພັດທະນາເມືອງວຽງໄຊ ໃຫ້ກາຍເປັນເມືອງທ່ອງທ່ຽວ ດ້ານປະຫວັດສາດ ແລະທຳມະຊາດ.

**17. ການຮ່ວມມືດ້ານຄົມມະນາຄົມ, ຂົນສົ່ງ ແລະ ໄປສະນີ, ໂທລະຄົມ.**

17.1. ທັງສອງຝ່າຍເຫັນດີຮ່ວມມືສຶກສາຄວາມເປັນໄປໄດ້ ໃນການແລ່ນລົດປະຈຳທາງ, ສາຍທາງຈຳປາສັກ-ຄຸນມິງ.

